ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງບໍລິຄຳໄຊ

ພະແນກ ຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ

ເລກທີ...813./ຖວທ.ຂ.

ບໍລິຄຳໄຊ,ວັນທີ.20.ກັນຍາ 2021.

# ແຈ້ງການ

**ເຖິງ:** ຫົວໜ້າ ຫ້ອງການ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ 7 ຕົວເມືອງ.

- ສະມາຄົມທຸລະກິດ ໂຮງແຮມ-ເຮືອນພັກ, ຮ້ານອາຫານກິນດື່ມ-ບັນເທີງ ແລະ ບັນດາເຈົ້າຂອງຮ້ານອາຫານ-ກິນດື່ມບັນເທີງ ທຸກເມືອງ ທົ່ວແຂວງ.

**ເລື່ອງ:** ການສືບຕໍ່ຈັດຕັ້ງປະຕິບັດມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19 ໃນໄລຍະແຕ່ ວັນທີ 20 ກັນຍາ -03 ຕຸລາ 2021.

- ອີງຕາມ ແຈ້ງການ ຂອງຄະນະສະເພາະກິດ ແຂວງບໍລິຄຳໄຊ ສະບັບເລກທີ 33/ສພກ.ຂບຊ, ລົງວັນທີ 18 ກັນຍາ 2021.
- ອີງຕາມ ແຈ້ງການແນະນຳເພີ່ມເຕີມຂອງຄະນະສະເພາະກິດ ແຂວງບໍລິຄຳໄຊ ສະບັບເລກທີ 34/ສພກ.ຂບຊ, ລົງວັນທີ 18 ກັນຍາ 2021.
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງເຄື່ອນໄຫວຂອງພະແນກ ຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວແຂວງ ສະບັບ ເລກທີ 844/ຖວທ,ລົງວັນທີ 01 ສິງຫາ 2016.

ພະແນກ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ຂໍແຈ້ງການມາຍັງ ບັນດາທ່ານຫົວໜ້າ ຖວທ 07 ໂຕເມືອງ, ບັນດາຫົວໜ້າສາມາຄົມ, ເຈົ້າຂອງທຸລະກິດການທ່ອງທ່ຽວ, ຫົວໜ່ວຍບໍລິການຕ່າງໆພາຍໃນທົ່ວແຂວງ ໃຫ້ສືບຕໍ່ປະຕິບັດມາດຕະການ ປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19 ຢ່າງເຂັ້ມງວດໃນໄລຍະແຕ່ວັນທີ 20 ກັນຍາ - 03 ຕຸລາ 2021 ດັ່ງນີ້:

1. **ມາດຕະການສືບຕໍ່ຫ້າມ**:

   1.1. ສືບຕໍ່ປິດກິດຈະການຮ້ານບັນເທີງ, ຮ້ານຄາຣາໂອເກະ ແລະ ຮ້ານກິນ-ດື່ມທຸກປະເພດ;

2. **ມາດຕະການສືບຕໍ່ຜ່ອນຜັນ: ສືບຕໍ່ໃຫ້ອະນຸຍາດເປີດກິດຈະການຢູ່ຄື:**

2.1. ເຂດ/ບ້ານຂຽວ ແລະ ເຂດ/ບ້ານເຫຼືອງ ເຫັນດີໃຫ້ເປີດບໍລິການ ເຮືອນພັກ, ໂຮງແຮມ, ລີສອດ, ຮ້ານຣິມຢາພື້ນເມືອງ ,ຮ້ານນວດ ( ໂດຍຜູ້ມາໃຊ້ບໍລິການ ແລະ ຜູ້ຮັບບໍລິການ ຕ້ອງໄດ້ຮັບວັກເຊີນຄົບໂດສ) ໃຫ້ ເປີດບໍລິການບໍ່ໃຫ້ກາຍ 20:00 ໂມງ, ແຕ່ຕ້ອງໃຫ້ມີປື້ມບັນທຶກລົງທະບຽນຜູ້ມາໃຊ້ບໍລິການ ເປັນຕົ້ນ: ຊື່-ນາມສະກຸນ ເລກບັດປະຈຳໂຕ, ເບີໂທລະສັບ, ທີ່ຢູ່, ອາຊີບ, ຫຼື ບ່ອນປະຈຳການ ແລະ ຂໍ້ມູນອື່ນໆ; ພ້ອມທັງມີການວັດແທກອຸນນະພູມ, ຮັກສາໄລຍະຫ່າງ ຢ່າງໜ້ອຍ 01 ແມັດ, ໃສ່ຜ້າອັດປາກ-ດັງ, ລ້າງມືດ້ວຍນ້ຳສະອາດໃສ່ສະບູ ຫຼື ເຈວລ້າງມື.

Scanned with CamScanner

2.2. ສືບຕໍ່ອະນຸຍາດໃຫ້ເປີດບໍລິການຢູ່ເຂດ/ບ້ານຂຽວ ແລະ ເຂດ/ບ້ານເຫຼືອງ ເປັນຕົ້ນ: ຮ້ານອາຫານ, ຮ້ານກາເຟ, ສວນອາຫານ, ລີສອດ, ສະຖານທີ່ທ່ອງທ່ຽວ, ຮ້ານປີ້ງ, ຮ້ານຕໍາ, ຮ້ານເຂົ້າປຽກ, ຮ້ານເຝີ ( ໃຫ້ປິດບໍລິການບໍ່ໃຫ້ເກີນ 21:00 ໂມງ ) ແຕ່ໃຫ້ຜູ້ປະກອບການ ຫຼື ເຈົ້າຂອງສະຖານທີ່ ປະຕິບັດມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອຢ່າງເຂັ້ມງວດ; ເປັນຕົ້ນ ແມ່ນມີການວັດແທກອຸນນະພູມ, ຮັກສາໄລຍະຫ່າງຢ່າງໜ້ອຍ 01 ແມັດ, ໃສ່ຜ້າອັດປາກ-ດັງ, ລ້າງມືດ້ວຍນໍ້າສະອາດໃສ່ສະບູ ຫຼື ເຈວລ້າງມື ທັງຜູ້ໃຫ້ບໍລິການ ແລະ ຜູ້ມາໃຊ້ບໍລິການ ພ້ອມທັງຫ້າມບໍ່ໃຫ້ມີການບໍລິການເບຍ ແລະ ເຄື່ອງດື່ມທີ່ມີທາດເຫຼົ້າທຸກປະເພດ ຢ່າງເດັດຂາດ;

2.3. ສໍາລັບເຂດບ້ານແດງແມ່ນຫ້າມເປີດການໃຫ້ບໍລິການຢ່າງເດັດຂາດ.

2.4. ບັນດາທຸລະກິດຢູ່ໃນຄວາມຮັບຜິດຊອບຂອງພະແນກ ຖວທ ແມ່ນບໍ່ອະນຸຍາດ ເປີດສຽງເພັງ ຢ່າງເດັດຂາດ.

**3. ກໍລະນີມີການລະເມີດຈະຖືກປະຕິບັດມາດຕະການປັບໃໝຄື:**

- ການລະເມີດໃນການເປີດຄາລາໂອເກາະ, ຮ້ານບັນເທີງ, ຮ້ານກິນດື່ມ ຫຼື ເປີດການບໍລິການຮ້ານທີ່ອະນຸຍາດໃຫ້ບໍລິການກາຍໂມງທີ່ກໍານົດໄວ້, ມີການຂາຍເບຍ ຫຼື ສິ່ງທີ່ມີທາດເຫຼົ້າຈະຖືກປັບໃໝດັ່ງນີ້:
- ຄັ້ງທີ 1 ຈະຖືກປັບໃໝ 500,000 ກີບ ພ້ອມສຶກສາອົບຮົມ;
- ການລະເມີດ ຄັ້ງທີ 2 ຈະຖືກປັບໃໝ 1,000,000 ກີບ ພ້ອມສັ່ງປິດກິດຈະການຊົ່ວຄາວ 5 ເດືອນ ແລະ ນໍາເຈົ້າຂອງກິດຈະການໄປກັກບໍລິເວນສຶກສາອົບຮົມເປັນເວລາ 24 ຊົ່ວໂມງ;
- ການລະເມີດ ຄັ້ງທີ 3 ຈະຖືກປັບໃໝ 3,000,000 ກີບ ພ້ອມສັ່ງປິດກິດຈະການຖາວອນ.

4. ມອບໃຫ້ຫ້ອງການ ຖວທ ໃນແຕ່ລະເມືອງລາຍງານຄະນະສະເພາະກິດຂັ້ນເມືອງຂອງຕົນ ແລະ ປະສານສົມທົບກັບເຈົ້າໜ້າທີ່ກ່ຽວຂ້ອງລົງຕິດຕາມ,ກວດກາເປັນປົກະຕິ ແລະ ລາຍງານໃຫ້ພະແນກ ຖວທ ຊາບ. ໃຫ້ຫ້ອງການ ຖວທ ເມືອງແຈ້ງຫາແຕ່ລະບ້ານ ເພື່ອນໍາເອົາແຈ້ງການຂອງຄະນະສະເພາະກິດຂັ້ນແຂວງ, ເມືອງ ອອກອ່ານຜ່ານທາງໂທລະໂຄ້ງທຸກມື້ເພື່ອໃຫ້ທຸກຄົນໄດ້ຮັບຊາບຢ່າງຖ້ວນເຖິງ.

ດັ່ງນັ້ນ, ຈຶ່ງແຈ້ງການມາຍັງ ບັນທ່ານເພື່ອ ຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ຫົວໜ້າພະແນກ

ພະແນກ ຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ແຂວງບໍລິຄໍາໄຊ

ສິນທອງ ວິບູນກ້ວາງ

Scanned with CamScanner